ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງ ກະສິກຳ ແລະ ປ່າໄມ້

ກົມປູກຝັງ

ເລກທີ 0098 /ກປພ.08

ນະຄອນຫຼວງວຽງຈັນ, ວັນທີ: 06 FEB 2008

ເຖິງ: ຫົວໜ້າ ຂະແໜງປູກຝັງ ແຂວງ ແລະ ນະຄອນຫລວງວຽງຈັນ.

ເລື່ອງ: ການອອກໃບຢັ້ງຢືນ ສຸຂະອະນາໄມພືດ (Phytosanitary Certificate)

- ອີງຕາມ ແຈ້ງການ ຂອງ ຄະນະເລຂາທິການລັດຖະບານ, ສຳນັກງານນາຍົກລັດຖະມົນຕີ ເລກທີ 1920/ຄລບ, ລົງວັນທີ 09.11.2007
- ອີງຕາມ ແຈ້ງການ ຂອງ ຄະນະເລຂາທິການລັດຖະບານ, ສຳນັກງານນາຍົກລັດຖະມົນຕີ ເລກທີ 1993/ຄລບ, ລົງວັນທີ 19.11.2007
- ອີງໃສ່ ຂໍ້ຕົກລົງ ຂອງລັດຖະມົນຕີ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກົມປູກຝັງ ເລກທີ 1058/ກປ, ລົງວັນທີ 23 ຕຸລາ 2007.

ໂດຍປະຕິບັດຕາມ ເນື້ອໃນຈິດໃຈ ແຈ້ງການ ຂັ້ນເທິງ ດັ່ງກ່າວ, ກົມປູກຝັງ ໄດ້ປັບປຸງ ແລະ ພັດທະນາ ລະບົບກັກກັນພືດ ເພື່ອເຮັດໃຫ້ ສອດຄ່ອງ ແລະ ເຊື່ອມໂຍງ ກັບຫລັກການ ການຄ້າ ລະຫວ່າງ ປະເທດ ຕາມແນວທາງ ຂອງ ພັກ ແລະ ລັດ ໃນໄລຍະໃໝ່ ໂດຍສະເພາະ ກໍ່ຄື ມາດຕະຖານ ສຸຂະອະນາໄມ ແລະ ສຸຂະອະນາໄມ ພືດ (SPS - Sanitary Phytosanitary Standards) ໃນການນຳເຂົ້າ ພືດ ແລະ ຜະລິດຕະພັນພືດ ມາຍັງ ສ ປ ປ ລາວ ແລະ ສົ່ງອອກໄປຍັງ ຕ່າງປະເທດ (ລວມທັງຜະລິດຕະພັນ ທີ່ນຳຜ່ານ ໄປຍັງ ປະເທດ ທີ ສາມ) ຢູ່ຕາມດ່ານຊາຍແດນ ຕ່າງໆ ໃຫ້ຖືກຕ້ອງຕາມ ລະບຽບການປ້ອງກັນພືດ ຂອງ ສ ປ ປ ລາວ ແລະ ສອດຄ່ອງ ກັບ ສົນທິສັນຍາ ປ້ອງກັນພືດ ສາກົນ, ດັ່ງລາຍລະອຽດ ນີ້ :

1. ໃຫ້ຢຸດຕິ ການອອກໃບຢັ້ງຢືນສຸຂະອະນາໄມພືດ ໃຫ້ແກ່ ພືດ ແລະ ຜະລິດຕະພັນພືດ ຈາກ ແຫລ່ງປູກ ຢູ່ຕ່າງປະເທດ ທີ່ມີຈຸດປະສົງ ຈະສົ່ງຜ່ານ ສ ປ ປ ລາວ ໄປຍັງປະເທດ ທີ ສາມ, ຖ້າແມ່ນ ພືດ ແລະ ຜະລິດຕະພັນພືດ ຊຶ່ງຜະລິດຢູ່ ພາຍໃນປະເທດ ທີ່ມີຈຸດປະສົງ ສົ່ງອອກໄປ ຕ່າງປະເທດ ແມ່ນໃຫ້ປະຕິບັດຕາມ ຕາມຄວາມຮຽກຮ້ອງຕ້ອງການ ຂອງປະເທດນຳເຂົ້າ ແລະ ຫລັກການ ມາດຕະຖານ ສາກົນ ດ້ານມາດຕະການ ສຸຂະອະນາໄມພືດ.

ຖ້າຂະແໜງປູກຝັງ ແຂວງ ແລະ ນະຄອນຫລວງ ຍັງບໍ່ທັນເຂົ້າໃຈ ຫລັກການ ສາກົນ ໃຫ້ ປະສານສົມທົບກັບ ກົມປູກຝັງ ທາງດ້ານຫລັກການ ແລະ ເຕັກນິກ ກ່ອນການອອກໃບຢັ້ງຢືນ ສຸຂະອະນາໄມພືດ ໄປຍັງປະເທດ ທີ ສາມ.

2. ຫ້າມ ອອກໃບຢັ້ງຢືນ ສຸຂະອະນາໄມພືດ ທີ່ຜິດກົດໝາຍ ຊຶ່ງ ບໍ່ເປັນໄປຕາມ ຫລັກການ ຂອງ ສົນທິສັນຍາ ການປ້ອງກັນພືດສາກົນ ໂດຍສະເພາະ ການສ້າງ ແບບຟອມ ຂຶ້ນເອງ.

ດັ່ງນັ້ນ ຈຶ່ງແຈ້ງມາ ຍັງ ທົ່ວໜ້າຂະແໜງ ປູກຝັງ ແຂວງ ແລະ ນະຄອນຫລວງເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຫົວໜ້າກົມປູກຝັງ

ກົມປູກຝັງ

ວິລະກັນ ພັນບຸລາດ

<u>ສຳເນົາບ່ອນສົ່ງ:</u>

- ຫ້ອງການ ກະຊວງກະສິກຳ ແລະ ປ່າໄມ້ 1 ສະບັບ (ເພື່ອຊາບ)
- ກົມກວດກາ 1 ສະບັບ (ເພື່ອຊາບ)
- ກົມແຜນການ 1 ສະບັບ (ເພື່ອຊາບ)
- ກົມຈັດຕັ້ງ ແລະ ພະນັກງານ 1 ສະບັບ (ເພື່ອຊາບ)
- ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ ແລະ ນະຄອນຫລວງ (ເພື່ອຊາບ)